# ສັນຍາການເຂົ້າຮ່ວມໃນໂຄງການສົ່ງເສີມ ໃຫ້ຄອບຄົວກຸ້ມຕົນເອງ (FSS)

ໃບອະນຸຍາດໃຫ້ເລືອກທີ່ພັກອາສັຍ

ໂຄງການເຄຫະສຖານຫລວງແລະສຳລັບຊົນເຜົ່າອາເມຣິກັນອິນດຽນ

**ກະຊວງເຄຫະສຖານແລະ ການພັທນາຕົວເມືອງຂອງສຫະຣັຖ**

ກົມເຄຫະສຖານຫລວງແລະສຳລັບຊົນເຜົ່າອາເມຣິກັນ ອິນດຽນ

OMB ອະນຸຍາດເບີ 2577-0178
(ໝົດກຳນົດ 07/31/2010)

---

ສັນຍາການເຂົ້າຮ່ວມໂຄງການສົ່ງເສີມໃຫ້ຄອບຄົວກຸ້ມຕົນເອງ (FSS) ສບັບນີ້ ແມ່ນລະວ່າງ

______________________, ກົມເຄຫະສຖານ (HA), ແລະ

______________________________________________________

______________________________________________________, ຫົວໜ້າຄອບຄົວ FSS.

ຄອບຄົວ FSS ໝາຍເຖິງໝົດທຸກຄົນໃນເຮືອນ ແລະເອີ້ນວ່າ "ຄອບຄົວ" ໃນສັນຍາສບັບນີ້.

**ໂຄງການ FSS ປະເພດໃດ:**

ຄອບຄົວປະກອບສ່ວນໃນໂຄງການ (ເລືອກຂີດກາບາກໃສ່ບ່ອນດຽວ)

☐ ໃບອະນຸຍາດໃຫ້ເລືອກທີ່ພັກອາສັຍ (HCV) ໃນໂຄງການ FSS

☐ ເຮືອນຫລວງ ໃນໂຄງການ FSS

☐ ເຮືອນສຳລັບຊົນເຜົ່າອາເມຣິກັນອິນດຽນ ໃນໂຄງການ FSS

**ຈຸດປະສົງຂອງສັນຍາ**

ຈຸດປະສົງຂອງສັນຍານີ້ ແມ່ນເພື່ອບົ່ງບອກສິດທິແລະຄວາມຮັບຜິດຊອບຂອງທັງຄອບຄົວ ແລະ HA, ຊັພຍາກອນແລະການບໍຣິການຕ່າງໆທີ່ຄອບຄົວຈະໄດ້ຮັບແລະກິຈກັມຕ່າງໆທີ່ຄອບຄົວຕ້ອງປະຕິບັດໃຫ້ຄົບຖ້ວນ.

**ເງື່ອນໄຂຂອງສັນຍາ**

ສັນຍານີ້ມີຜົນໃຊ້ປະຕິບັດ ຕັ້ງແຕ່ວັນທີ __________________________.

ສັນຍານີ້ໝົດອາຍຸໃນວັນທີ __________________________.

HA ສາມາດຕໍ່ອາຍຸຂອງສັນຍາອອກໄປໄດ້ເຖິງສອງປີ ຖ້າຄອບຄົວຂຽນຄຳຮ້ອງໄປຂໍຕໍ່ກັບ HA ແລະ HA ລົງຄວາມເຫັນວ່າມີເຫດຜົນພຽງພໍທີ່ຈະຕໍ່ໃຫ້.

**ຊັພຍາກອນແລະການບໍຣິການສນັບສນູນຕ່າງໆ**

ຕລອດກຳນົດຫລືອາຍຸຂອງສັນຍາ HA ຈະພະຍາຍາມອະນຸມັດຊັພຍາກອນແລະການບໍຣິການຕ່າງໆທີ່ບົ່ງໄວ້ໃນແຜນການອົບຮົມແລະແຜນການໃຫ້ການບໍຣິການ. ຖ້າຫາກວ່າ HA ບໍ່ສາມາດໃຫ້ຊັພຍາກອນແລະການບໍຣິການທີ່ບົ່ງໄວ້ນັ້ນໄດ້ HA ກໍຈະພະຍາຍາມຊອກຫາຊັພຍາກອນແລະການບໍຣິການອື່ນໆມາໃຫ້ແທນ ແຕ່ HA ຈະບໍ່ຮັບຜິດຊອບຖ້າວ່າບໍ່ສາມາດໃຫ້ຊັພຍາກອນແລະການບໍຣິການແກ່ຄອບຄົວໄດ້.

**ບັນຊີເງິນຝາກສຳລອງໄວ້ຂອງ FSS ສຳລັບຈ່າຍໃຫ້ຄອບຄົວ**

HA ຈະເປີດບັນຊີເງິນຝາກໄວ້ໃຫ້ຄອບຄົວຕາມໂຄງການ FSS. ສ່ວນນຶ່ງຂອງເງິນຄ່າເຊົ່າຂອງຄອບຄົວທີ່ສູງຂຶ້ນຍ້ອນລາຍໄດ້ທີ່ສູງຂຶ້ນນັ້ນ ຈະສົ່ງໄປເຂົ້າບັນຊີເງິນຝາກຂອງ FSS ສຳລັບຄອບຄົວ ຕາມເງື່ອນໄຂຂອງກະຊວງເຄຫະສຖານ ແລະການພັທນາຕົວເມືອງ (HUD).

ຂຽນຢູ່ຂ້າງລຸ່ມນີ້ ແມ່ນຈຳນວນຣາຍໄດ້ຂອງຄອບຄົວໃນນຶ່ງປີ, ເງິນທີ່ຫາມາໄດ້ ແລະຄ່າເຊົ່າເຮືອນໃນເວລາທີ່ຄອບຄົວເຣີ່ມເຂົ້າຮ່ວມໃນໂຄງການ FSS. ຈຳນວນເງິນທັງໝົດນີ້ຈະໃຊ້ເປັນພື້ນຖານໃນການກຳນົດຈຳນວນເງິນທີ່ຈະນຳໄປເຂົ້າບັນຊີເງິນຝາກຂອງ FSS ສຳລັບຄອບຄົວ ຍ້ອນວ່າເງິນທີ່ຫາໄດ້ນັ້ນຈະເພີ່ມຂຶ້ນໃນອະນາຄົດ.

| | |
|---|---|
| ຣາຍໄດ້ປະຈຳປີ | $ ____________ |
| ເງິນທີ່ຫາມາໄດ້ | $ ____________ |
| ຄ່າເຊົ່າບ້ານ(ທັງໝົດທີ່ຈ່າຍໂດຍຄອບຄົວ ຫລືສຳລັບໂຄງການ HCV, 30% ຂອງຣາຍໄດ້ທີ່ເຫລືອຈາກການຕັດອາກອນຕ່າງໆແຕ່ລະເດືອນ) | $ ____________ |

HA ຈະເອົາເງິນໃນບັນຊີ FSS ໄປລົງທຶນຕາມການເຫັນພ້ອມຂອງ HUD. HA ຈະລາຍງານໃຫ້ຄອບຄົວຮູ້ຢ່າງໜ້ອຍປີລະເທື່ອ ກ່ຽວກັບຈຳນວນເງິນຝາກທີ່ມີຢູ່ໃນບັນຊີທະນາຄານຕາມໂຄງການ FSS.

ຖ້າຄອບຄົວທີ່ເຂົ້າຮ່ວມໃນໂຄງການ HCV ຍ້າຍໜີອອກນອກເຂດຂອງ HA ຢ່າງຖືກຕ້ອງຕາມກົດຣະບຽບຂອງໂຄງການ HCV, HA ກໍມີສິດທີ່ຈະໂອນຈຳນວນເງິນຝາກຂອງຄອບຄົວ ໄປໃສ່ບັນຊີຂອງ HA ບ່ອນໃໝ່.

**ການຖອນເງິນອອກຈາກບັນຊີເງິນຝາກຂອງ FSS**

HA ອາດອະນຸຍາດໃຫ້ຄອບຄົວຖອນເງິນອອກຈາກບັນຊີເງິນຝາກຂອງ FSS ໄດ້ກ່ອນສັນຍາຈະໝົດກຳນົດ ຖ້າຄອບຄົວຫາກບັນລຸເຖິງເປົ້າໝາຍຊົ່ວຄາວສເພາະຕ່າງໆ ທີ່ HA ຕັ້ງໄວ້ນັ້ນ ແລະຕ້ອງການໃຊ້ເງິນນັ້ນບາງສ່ວນເພື່ອຊ່ວຍໃຫ້ຕົນສາມາດບັນລຸເປົ້າໝາຍທີ່ບົ່ງໄວ້ໃນສັນຍາ (ເຊັ່ນ ເສັຽຄ່າຮຽນ).

HA ຈະມອບເງິນທີ່ມີຢູ່ໃນບັນຊີເງິນຝາກ FSS ຂອງຄອບຄົວໃຫ້ແກ່ຫົວໜ້າຄອບຄົວ ຫລັງຈາກທີ່ໄດ້ຫັກຈຳນວນທີ່ຍັງຄ້າງ HA ອອກແລ້ວ, ເມື່ອ:

(1) HA ເຫັນວ່າຄອບຄົວໄດ້ປະຕິບັດຕາມສັນຍາຢ່າງຄົບຖ້ວນ ແລະ

(2) ໃນເວລາທີ່ໄດ້ປະຕິບັດສັນຍາຢ່າງຄົບຖ້ວນແລ້ວນັ້ນ ຫົວໜ້າຄອບຄົວໄດ້ມອບໃບຢັ້ງຢືນຕໍ່ HA ວ່າບໍ່ມີສມາຊິກໃນຄອບຄົວຜູ້ໃດໄດ້ຮັບເງິນສົງເຄາະ (welfare). ສຳລັບໂຄງການ FSS, welfare ໝາຍເຖິງເງິນຊ່ວຍເຫລືອຈາກໂຄງການປະຊາສົງເຄາະຂອງຣັຖບານກາງຫລືຣັຖບານຣັຖ ແລະເປັນເງິນສົດເພື່ອໃຫ້ຄອບຄົວສາມາດໃຊ້ຈ່າຍຊື້ເຄື່ອງໃຊ້ສອຍພື້ນຖານຕ່າງໆ ທີ່ຈຳເປັນຕໍ່ການດຳຣົງຊີວິດປະຈຳວັນ.

ໃນກໍຣະນີທີ່ຫົວໜ້າຄອບຄົວຍ້າຍອອກຈາກເຮືອນທີ່ເປັນການຊ່ວຍເຫລືອນັ້ນ ສມາຊິກໃນຄອບຄົວສາມາດແຕ່ງຕັ້ງສມາຊິກຜູ້ອື່ນໃນຄອບຄົວເປັນຜູ້ເບີກເງິນຈາກບັນຊີເງິນຝາກຂອງ FSS ຫລັງຈາກໄດ້ປຶກສາຫາລືກັບ HA ແລ້ວ.

**ໝົດສິດຖອນເງິນຈາກບັນຊີເງິນຝາກ FSS**

ຄອບຄົວຈະບໍ່ສາມາດຖອນເງິນອອກຈາກບັນຊີເງິນຝາກ FSS ຂອງຕົນໄດ້ ຖ້າ:

(1) ສັນຍາການເຂົ້າຮ່ວມໂຄງການຖືກຍົກເລີກ,

(2) ສັນຍາການເຂົ້າຮ່ວມຕົກເປັນໂມຄະ; ຫລື

(3) ຄອບຄົວບໍ່ສາມາດປະຕິບັດຕາມຄວາມຮັບຜິດຊອບຂອງຕົນພາຍໃນລະຍະເວລາທີ່ກຳນົດໄວ້ໃນສັນຍາ.

**ຄວາມຮັບຜິດຊອບຂອງຄອບຄົວ**

**ຫົວໜ້າຄອບຄົວຕ້ອງ:**

- ຊອກຫາວຽກງານທີ່ເໝາະສົມເຮັດ ແລະຮັກສາໄວ້ ຫລັງຈາກຈົບການອົບຮົມທີ່ບົ່ງໄວ້ໃນແຜນການຝຶກອົບຮົມແລະການບໍຣິການຂອງຕົນ. ຫລັງຈາກທີ່ປຶກສາຫາລືກັບຫົວໜ້າຄອບຄົວແລ້ວ HA ຈະເປັນຜູ້ລົງຄວາມເຫັນວ່າວຽກງານໃດເໝາະສົມ ອ້າງອີງໃສ່ຄວາມຊໍານານ ການສຶກສາ ແລະການຝຶກອົບຮົມຂອງແຕ່ລະຄົນ ແລະວຽກງານທີ່ຫາໄດ້ໃນເຂດນັ້ນ.

**ຫົວໜ້າແລະສມາຊິກອື່ນໆໃນຄອບຄົວຜູ້ທີ່ໄດ້ຕັດສິນໃຈ, ດ້ວຍຄວາມເຫັນຊອບຈາກ HA, ທີ່ຈະປະຕິບັດແຜນການຝຶກອົບຮົມແລະການບໍຣິການຂອງສ່ວນບຸກຄົນ ຕ້ອງ:**

- ປະຕິບັດເງື່ອນໄຂທຸກຢ່າງໃຫ້ຄົບຖ້ວນພາຍໃນເວລາທີ່ບົ່ງໄວ້ໃນແຜນການຝຶກອົບຮົມແລະການບໍຣິການຂອງແຕ່ລະຄົນ.
- ສົ່ງຂໍ້ມູນກ່ຽວກັບການເຂົ້າຮ່ວມໂຄງການ FSS ຂອງຄອບຄົວໃຫ້ແກ່ HA ແລະ HUD ເພື່ອໃຫ້ HA ແລະ HUD ປະເມີນຜົນຂອງໂຄງການ FSS ຊຶ່ງອາດໂຮມທັງຂໍ້ມູນກ່ຽວກັບວຽກການ, ການສໍາພາດສມັກງານ, ການອົບຮົມ, ການສຶກສາແລະການບໍຣິການແລະກິຈກັມຕ່າງໆຂອງ FSS.

**ສມາຊິກໃນຄອບຄົວທຸກຄົນຕ້ອງ:**

- ປະຕິບັດຕາມເງື່ອນໄຂໃນສັນຍາເຊົ່າ
- ຖ້າໄດ້ຮັບເງິນຊ່ວຍເຫລືອ (welfare) ຕ້ອງເຊົາຮັບເງິນຊ່ວຍເຫລືອ, ການງົດນີ້ຕ້ອງດົນເຖິງ 12 ເດືອນຕິດຕໍ່ກັນ ກ່ອນສັນຍາຈະໝົດອາຍຸ.
- ຖ້າເຂົ້າຮ່ວມໂຄງການ HCV ຄອບຄົວຕ້ອງປະຕິບັດຕາມພັນທະຂອງຄອບຄົວທີ່ບົ່ງໄວ້ໃນໂຄງການ HCV ແລະຕ້ອງອາສັຍຢູ່ໃນເຂດປົກຄອງຂອງ HA ທີ່ໄດ້ຮັບເອົາຄອບຄົວເຂົ້າຮ່ວມໃນໂຄງການ FSS ຢ່າງໜ້ອຍ 12 ເດືອນ ນັບແຕ່ມື້ທີ່ສັນຍາມີຜົນໃຊ້ປະຕິບັດເປັນຕົ້ນໄປ, ນອກຈາກວ່າຫ້ອງການ PHA ທໍາອິດຈະອະນຸມັດໃຫ້ຕາມຄໍາຮ້ອງຂອງຄອບຄົວ ທີ່ຢາກຍ້າຍອອກຈາກເຂດປົກຄອງຂອງຕົນ.

**ມາຕການແກ້ໄຂ ໃນກໍຣະນີທີ່ຄອບຄົວບໍ່ປະຕິບັດຕາມຄວາມຮັບຜິດຊອບຂອງຕົນ**

ຖ້າສມາຊິກໃນຄອບຄົວຜູ້ໃດຜູ້ນຶ່ງບໍ່ປະຕິບັດຕາມຄວາມຮັບຜິດຊອບຂອງຕົນ ພາຍໃຕ້ເງື່ອນໄຂຂອງສັນຍາສບັບນີ້, ຄອບຄົວຈະບໍ່ສາມາດເບີກເງິນໃນບັນຊີເງິນຝາກຂອງຕົນໃນໂຄງການ FSS ແລະ HA ສາມາດ

(1) ເຊົາໃຫ້ການບໍຣິການຊ່ວຍເຫລືອແກ່ຄອບຄົວ

(2) ຍົກເລີກການເຂົ້າຮ່ວມຂອງຄອບຄົວໃນໂຄງການ FSS ແລະ

(3) ໃນກໍຣະນີທີ່ຄອບຄົວເຂົ້າຮ່ວມໃນໂຄງການ HCV ກໍຈະເຊົາໃຫ້ການຊ່ວຍເຫລືອ, ເວລາໃດບໍ່ຂັດກັບກົດຣະບຽບຂອງ HUD.

**ຄວາມຮັບຜິດຊອບຂອງ HA**

- ພະຍາຍາມຂໍໃຫ້ຝ່າຍທາງການແລະເອກຊົນອະນຸມັດການບໍຣິການຕ່າງໆ ເພື່ອຊ່ວຍເຫລືອຄອບຄົວ.
- ເປີດບັນຊີເງິນຝາກ FSS ໃຫ້ຄອບຄົວ, ນໍາເງິນດັ່ງກ່າວໄປລົງທຶນແລະລາຍງານໃຫ້ຄອບຄົວຮູ້ກ່ຽວກັບຈໍານວນເງິນໃນບັນຊີ ຢ່າງໜ້ອຍປີລະເທື່ອ.
- ຕັດສິນວ່າຄອບຄົວຕ້ອງບັນລຸເປົ້າໝາຍຊົ່ວຄາວອັນໃດກ່ອນ ຖ້າມີ ກ່ອນທີ່ຈະສາມາດເບີກເງິນໃນບັນຊີເງິນຝາກຂອງ FSS ໄດ້; ແລະເບີກເງິນຈໍານວນນຶ່ງຈາກບັນຊີເງິນຝາກຂອງ FSS ໃຫ້ແກ່ຄອບຄົວ ຖ້າ HA ເຫັນວ່າຄອບຄົວໄດ້ບັນລຸເຖິງເປົ້າໝາຍຊົ່ວຄາວ ແລະຕ້ອງການເງິນຈາກບັນຊີເງິນຝາກເພື່ອໄປປະຕິບັດສັນຍາໃຫ້ຄົບຖ້ວນ.
- ຕັດສິນວ່າຄອບຄົວໄດ້ປະຕິບັດສັນຍານີ້ຢ່າງຄົບຖ້ວນ ຫລືບໍ່.
- ເບີກໃຫ້ແກ່ຄອບຄົວເງິນທີ່ຢູ່ໃນບັນຊີເງິນຝາກ, ຖ້າຄອບຄົວໄດ້ປະຕິບັດສັນຍາຢ່າງຄົບຖ້ວນ ແລະຖ້າຫົວໜ້າຄອບຄົວໄດ້ອອກໃບຢັ້ງຢືນວ່າບໍ່ມີສມາຊິກໃນຄອບຄົວຜູ້ໃດໄດ້ຮັບເງິນຊ່ວຍເຫລືອ (welfare).

**ການສໍາເຣັດການປະຕິບັດສັນຍາການເຂົ້າຮ່ວມຢ່າງຄົບຖ້ວນ**

ການປະຕິບັດສັນຍາຖືວ່າຄົບຖ້ວນ ເມື່ອ HA ລົງຄວາມເຫັນວ່າ

(1) ຄອບຄົວໄດ້ປະຕິບັດໜ້າທີ່ທຸກຢ່າງຂອງຕົນຕາມທີ່ບົ່ງໄວ້ໃນສັນຍາ; ຫລື

(2) 30% ຂອງລາຍໄດ້ຂອງຄອບຄົວຫລັງຈາກຫັກພາສີອາກອນຕ່າງໆແລ້ວ ມີຈໍານວນເທົ່າກັບ ຫລືວ່າຫລາຍກວ່າຄ່າເຊົ່າທີ່ຄິດກັນຕາມທ້ອງຕລາດສໍາລັບຂນາດເຮືອນທີ່ຄອບຄົວມີສິດຢູ່ນັ້ນ.

**ການຍົກເລີກສັນຍາເຂົ້າຮ່ວມ**

HA ມີສິດຍົກເລີກສັນຍາສບັບນີ້ ຖ້າຫາກວ່າ

(1) ຄອບຄົວແລະ HA ຕົກລົງຍົກເລີກສັນຍາຮ່ວມກັນ;

(2) HA ເຫັນວ່າຄອບຄົວບໍ່ໄດ້ປະຕິບັດໜ້າທີ່ຂອງຕົນຕາມທີ່ບົ່ງໄວ້ໃນສັນຍາ;

(3) ຄອບຄົວຖອນຕົວອອກຈາກໂຄງການ FSS;

(4) ເຫດການຢ່າງໃດຢ່າງນຶ່ງເກີດຂຶ້ນ ຊຶ່ງບໍ່ເປັນທີ່ສອດຄ້ອງກັບຈຸດປະສົງຂອງໂຄງການ FSS; ຫລືວ່າ

(5) HA ໄດ້ຮັບອະນຸຍາດໃຫ້ຍົກເລີກໄດ້ ຕາມເງື່ອນໄຂຂອງ HUD.

HA ສາມາດປະກາດວ່າສັນຍາສບັບນີ້ຕົກເປັນໂມຄະ ຖ້າບໍ່ມີຊັພຍາກອນຫລືການບໍຣິການທີ່ຈະຊ່ວຍເຮັດໃຫ້ໂຄງການສາມາດບັນລຸເຖິງເປົ້າໝາຍໄດ້.

HA ຕ້ອງແຈ້ງການຍົກເລີກສັນຍາໃຫ້ຫົວໜ້າຄອບຄົວຊາບ. ໃບແຈ້ງການຕ້ອງບົ່ງເຖິງເຫດຜົນທີ່ເຮັດໃຫ້ HA ຈໍາເປັນຕ້ອງຍົກເລີກສັນຍາ.

ຖ້າສັນຍາຖືກຍົກເລີກຫລືຕົກເປັນໂມຄະ ຄອບຄົວກໍບໍ່ມີສິດຖອນເງິນອອກຈາກບັນຊີເງິນຝາກໃນໂຄງການ FSS ຂອງຕົນ. HA ຕ້ອງປິດບັນຊີເງິນຝາກໃນໂຄງການ FSS ຂອງຄອບຄົວ ແລະ ມີສິດນໍາເງິນໃນບັນຊີດັ່ງກ່າວໄປໃຊ້ເພື່ອຜົນປະໂຫຍດຢ່າງອື່ນ ທີ່ສອດຄ້ອງກັບເງື່ອນໄຂຂອງ HUD.

ໃນກໍຣະນີທີ່ຄອບຄົວເຂົ້າຮ່ວມໃນໂຄງການ HCV ທາງ HA ຈະຍົກເລີກສັນຍາ ຖ້າຄອບຄົວຫາກຍ້າຍໜີອອກຈາກເຂດຮັບຜິດຊອບຂອງ HA ພາຍໃຕ້ກົດຣະບຽບທີ່ອະນຸຍາດໃຫ້ຍ້າຍໄດ້ ແລະໄປເຂົ້າຮ່ວມໃນໂຄງການ FSS ຂອງອີກ HA ນຶ່ງ.

ຖ້າຄອບຄົວເຂົ້າຮ່ວມໃນໂຄງການ HCV ສັນຍາສບັບນີ້ຈະຕົກເປັນໂມຄະໂດຍອັຕໂນມັດ ຖ້າຫາກການຊ່ວຍເຫລືອແກ່ຄອບຄົວຖືກຍົກເລີກ ຢ່າງຖືກຕ້ອງຕາມເງື່ອນໄຂຂອງ HUD.

**ການຂັດແຍ້ງກັບສັນຍາເຊົ່າໃນໂຄງການເຮືອນຫລວງຫລືເຮືອນສໍາລັບຊົນເຜົ່າອິນເດັຍແດງ**

ຖ້າສ່ວນໃດສ່ວນນຶ່ງຂອງສັນຍາສບັບນີ້ ຫາກຂັດກັນກັບສັນຍາເຊົ່າເຮືອນຫລວງຫລືເຮືອນສໍາລັບຊົນເຜົ່າອາເມຣິກັນອິນດຽນ ຕ້ອງຖືເອົາຕາມສັນຍາເຊົ່າເຮືອນຫລວງຫລືເຮືອນສໍາລັບຊົນເຜົ່າອາເມຣິກັນອິນດຽນ

**ການປະຕິບັດຕາມກົດຣະບຽບແລະເງື່ອນໄຂຂອງ HUD**

ການຕີຄວາມໝາຍແລະການບໍຣິຫານສັນຍາການເຂົ້າຮ່ວມນີ້ຕ້ອງເປັນໄປຕາມກົດຣະບຽບແລະເງື່ອນໄຂຂອງ HUD. HA ມີສິດກວດແກ້ເງື່ອນໄຂແລະຕົວເລກ ເຊັ່ນຣາຍໄດ້ແລະຈໍານວນເງິນຄ່າເຊົ່າເຮືອນໃນໜ້ານຶ່ງຂອງສັນຍາ ເພື່ອໃຫ້ສອດຄ້ອງກັບກົດຣະບຽບ ແລະເງື່ອນໄຂຂອງ HUD. HA ຕ້ອງແຈ້ງໃຫ້ຄອບຄົວຊາບເປັນລາຍລັກອັກສອນ ກ່ຽວກັບການດັດແປງຕ່າງໆໃນສັນຍາ.

**ລາຍເຊັນ:**

**ຄອບຄົວ**

________________________________________

(ລາຍເຊັນຫົວໜ້າຄອບຄົວ)

________________________________________

(ເຊັນວັນທີ່)

**ກົມເຄຫະສຖານ (HA)**

________________________________________

(ຊື່ຂອງ HA)

________________________________________

(ລາຍເຊັນຂອງເຈົ້າໜ້າທີ່ HA)

________________________________________

(ຕໍາແໜ່ງທາງການ)

________________________________________

(ເຊັນວັນທີ່)

***ເອກສານສະບັບນີ້ ແມ່ນແປມາຈາກເອກສານດ້ານກົດໝາຍສະບັບຕ່າງໆ ທີ່ກະຊວງເຄຫະສຖານແລະການພັທນາຕົວເມືອງຂອງສະຫະຣັຖໄດ້ນຳອອກເຜີຍແຜ່. ທາງກະຊວງເຄຫະສຖານ ແລະ ການພັທນາຕົວເມືອງ ໄດ້ຈັດເອກສານແປເປັນພາສາລາວສະບັບນີ້ ໄວ້ສນອງທ່ານເພື່ອອຳນວຍຄວາມສດວກແລະຊ່ວຍໃຫ້ທ່ານສາມາດເຂົ້າໃຈໃນສິດທິແລະພັນທະໜ້າທີ່ຂອງທ່ານ. ສຳເນົາພາສາອັງກິດຂອງເອກສານສະບັບນີ້ເທົ່ານັ້ນ ທີ່ເປັນເອກສານທາງການ ແລະມີອຳນາດຜູກມັດທາງດ້ານກົດໝາຍ. ເອກສານທີ່ແປອອກມາເປັນພາສາລາວສະບັບນີ້ ບໍ່ແມ່ນເອກສານທາງການແຕ່ຢ່າງໃດ.***